# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 14 ກັນຍາ 2008 (9-14-2008)

---

## <u>ມາເທື່ອລະຄົນ, ມາໝົດທຸກຄົນ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ມັດທາຍ 22:1-14)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>** ພຣະເຢຊູໄດ້ກ່າວເປັນຄຳອຸປມາເຣື່ອງກະສັດອົງນຶ່ງປະສົງຢາກໃຫ້ຄົນມາຮ່ວມໃນງານກິນລ້ຽງໃນງານແຕ່ງງານຂອງລູກຊາຍ, ພຣະເຢຊູໄດ້ສິດສອນໂດຍໃຊ້ຄຳອຸປມາວ່າໝົດທຸກຄົນໄດ້ຖືກເຊີນໃຫ້ເຂົ້າໃນຣາຊອານາຈັກສວັນ, ແຕ່ວ່າມີແຕ່ຜູ້ທີ່ທຳຕາມກຳນົດກົດເກນຂອງພຣະອົງເທົ່ານັ້ນທີ່ຈຶ່ງຈະຜ່ານປະຕູເຂົ້າໄປໄດ້.

**<u>ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:</u>**

ເມື່ອຖາມວ່າ, ເປັນຫຍັງພຣະເຈົ້າຈຶ່ງອະນຸຍາດໃຫ້ເຂົາເຂົ້າໄປໃນສວັນໄດ້? ມີຫລາຍຄົນພຍາຍາມອ້າງເຫດຜົນສ່ວນຕົວຫລືຄວາມສຳເຣັດໃນຄວາມເຊື່ອຂອງເຂົາຈຶ່ງສາມາດເຮັດໃຫ້ເຂົາເຂົ້າໄປໄດ້. ຄົນອື່ນ ໆຈົບລົງດ້ວຍການປະຕິເສດໂດຍທີ່ເຂົາເພີກເສີຍບໍ່ເອົາຫົວໃສ່ໃຈຊາດ້ວຍບາງລັກສະນະ, ການແຕ່ງກາຍ, ຫລືປະສົບການຕ່າງ ໆ. ແມ່ນແຕ່ຜູ້ເປັນຄຣິສຕຽນແລ້ວ, ບາງຄົນກໍມີທ່າທີສົງສັຍຢູ່ວ່າ ແມ່ນໃຜທີ່ພຣະເຈົ້າຕ້ອງການໃຫ້ເຂົ້າໄປໃນສວັນແລະເປັນເພາະເຫດໃດ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**

ໂດຍການເຂົ້າໃຈພຣະປະສົງຂອງພຣະເຈົ້າທີ່ປາຖນາໃຫ້ມະນຸດໄປເຖິງຣາຊອານາຈັກແຜ່ນດິນສວັນຂອງພຣະອົງ, ທ່ານສາມາດຮັບເອົາຄຳເຊື້ອເຊີນສຳລັບຕົນເອງ ແລະເຊີນຄົນອື່ນໃຫ້ເຂົ້າໄປໃນຣາຊອານາຈັກນັ້ນ. ໃນເມື່ອຖາມຄົນໃນສັງຄົມວັທນະທັມໃນສມັຍນີ້ ສ່ວຍຫລາຍເຂົາຕອບວ່າແນວໃດ? ດ້ວຍເຫດຜົນອັນໃດທີ່ສາມາດໃຫ້ເຂົ້າໄປໃນສວັນໄດ້?

**<u>ແນະນຳການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລົ້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ……..
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ
6. ໃຫ້ນັກຮຽນເວົ້າຄຳພະຍານຈາກປະສົບການໃນອາທິດທີ່ຜ່ານມາສັ້ນໆ.

7. ອະທິຖານເພື່ອຜູ້ຂາດໂບດແລະເປີດຫ້ອງຮຽນ

**1. <u>ບັດເຊີນໄດ້ສົ່ງອອກໄປແລ້ວ:</u>** (ມັດທາຍ 22:1-7)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມັດທາຍ 22:1-7
- ນໍາພາ ແລະໜູນໃຈໃຫ້ນັກຮຽນບອກຄໍາຕອບການເຊື້ອເຊີນໃນຄໍາອຸປມາຂອງກຸ່ມຄົນທີ່ຕອບມາວ່າມີຄໍາຕອບແຕກຕ່າງກັນແນວໃດ ແລະຄົນໃນສມັຍນີ້ເຂົາເຈົ້າໄດ້ຕອບສນອງຂ່າວປະເສີດຢ່າງໃດແດ່?
- ສົນທະນາກັນເຖິງກຸ່ມຄົນທີ່ນຶ່ງທີ່ຖືກເຊີນນັ້ນວ່າເຂົາໄດ້ມີທ່າທີແນວໃດຕໍ່ຄໍາເຊີນນັ້ນ...
- ໃຫ້ມາສົນທະນາກັນເບິ່ງວ່າ ຜູ້ທີ່ປະຕິເສດຄໍາເຊື້ອເຊີນໃຫ້ມາຮັບຄວາມລອດພົ້ນນັ້ນ, ພຣະເຈົ້າຈະເຮັດແນວໃດຕໍ່ພວກນີ້.

**<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ມັດທາຍ 22:1-7)

1. ງານລ້ຽງງານແຕ່ງງານນັ້ນມີອັນໃດແດ່ທີ່ຄ້າຍຄືກັບຣາຊອານາຈັກຂອງພຣະເຈົ້າ?
2. ທ່ານຈະອະທິບາຍເຣື່ອງການເຊີນຂອງພຣະເຈົ້າໃຫ້ກັບຄົນອື່ນແນວໃດ?
3. ເປັນເພາະເຫດໃດຈຶ່ງມີຄົນປະຕິເສດການເຊີນຂອງກະສັດນັ້ນ?
4. ພວກເຮົາຈະຊ່ອຍ ແລະປະກາດຂ່າວປະເສີດໃຫ້ແກ່ຜູ້ທີ່ບໍ່ຢາກຮັບເອົາຄວາມລອດພົ້ນຈາກພຣະເຈົ້າໄດ້ແນວໃດ?
5. ກະສັດໄດ້ສົ່ງບັດເຊີນອອກໄປຈັກສະບັບ? ແມ່ນຫຍັງແດ່ທີ່ທ່ານໄດ້ຮຽນເຣື່ອງພຣະເຈົ້າຜ່ານຄໍາອຸປມານີ້?

**2. <u>ໄປຊອກຫາຜູ້ທີ່ມາຮ່ວມງານລ້ຽງ:</u>** (ມັດທາຍ 22:8-10)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມັດທາຍ 22:8-10
- ໃຫ້ເວົ້າປະສົບການຊີວິດສ່ວນຕົວຂອງທ່ານ, ໃນເມື່ອທ່ານຖືກເຊີນໄປງານສເລີມສລອງຕ່າງ ໆ ມີງານໃດແດ່ທີ່ທ່ານບໍ່ຢາກໄປ. ຊຶ່ງໃນການເຊີນຂອງກະສັດນັ້ນກໍມີບາງຄົນບໍ່ໄດ້ຄິດ ບໍ່ມີຄວາມຫວັງໄວ້ກ່ອນ ເພາະເຂົາບໍ່ຮູ້ຈັກກະສັດ ແລະຮູ້ວ່າຕົນບໍ່ແມ່ນຄົນທີ່ສໍາຄັນພໍທີ່ຈະໄດ້ຮັບເຊີນຈາກກະສັດ.
- ບົດສົນທະນາ: ພວກເຮົາຫລາຍຄົນຂາດການເປີດບັດເຊີນທີ່ພໍ່ຂອງເຮົາເອົາໃຫ້. ພວກເຮົາຫລາຍຄົນໄດ້ເລືອກເປີດແຕ່ບັດເຊີນຜູ້ທີ່ເປັນຄືກັບເຮົາ (ຜູ້ທີ່ເຮົາມັກ).
- ມີຈັກຄົນໃນໂບດທີ່ມີບາງຄົນໃນຄອບຄົວຂອງເຂົາເຈົ້າ ຫລືໝູ່ຄູ່ເພື່ອນຝູງທີ່ຄົບຄ້າສະມາຄົມກັບຜູ້ທີ່ເປັນຄຣິສຕຽນຫລາຍກວ່າຄົນທາງນອກ. ມີບາງຄົນໃນຄອບຄົວຄຣິສຕຽນໂດຍສະເພາະຜູ້ບໍ່ເປັນເປັນຄຣິສຕຽນນັ້ນມັກຈະເມີນເສີຍຕໍ່ການເວົ້າລົມ ເຊີນຊວນຂອງຜູ້ເປັນຄຣິສຕຽນ.

**<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ມັດທາຍ 22:8-10

1. ຄົນປະເພດໃດທີ່ເຂົາເຈົ້າໄດ້ອອກໄປຊອກຫາເຊີນໃຫ້ມາງານລ້ຽງຂອງກະສັດ?

2. ພວກເຮົາຈະໄປຊອກຫາຄົນປະເພດນັ້ນເຂົ້າມາຫາພຣະເຈົ້າໄດ້ຢູ່ໃສ?
3. ເຮັດແນວໃດພວກເຮົາຈຶ່ງຈະຊ່ອຍພວວກມິຊັນນາຣີທີ່ອອກໄປນັ້ນໃຫ້ໄດ້ຄົນມາຫາພຣະເຈົ້າ?
4. ແມ່ນຫຍັງທີ່ມີຄວາມແຕກຕ່າງລະຫວ່າງຄົນທີ່ຖືກເຊີນຊຸດທີນຶ່ງ ແລະຊຸດທີສອງ?
5. ຄົນຊຸດໃດທີ່ທ່ານໄດ້ມີສ່ວນຮ່ວມກ່ອນທ່ານມາຮັບເອົາຄວາມລອດພົ້ນ?

3. <u>ໂທດກັມນໍາທັນ:</u> (ມັດທາຍ 22:11-14)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມັດທາຍ 22:11-14
- ໃຫ້ນັກຮຽນຜູ້ນຶ່ງອສາສມັກເລົ່າເຣື່ອງໂທດກັມຄອບງໍາ ເຊັ່ນ: ງານລ້ຽງ ຫລືການປະຊຸມທຸຣະກິດ.
- ຄວາມຈິງຊາຍຄົນນັ້ນແຕ່ງຕົວທີ່ບໍ່ເໝາະສົມສໍາລັບງານແຕ່ງລາວຈຶ່ງໄດ້ຮັບໂທດ.
- ການຕອບສນອງຂອງກະສັດນັ້ນໄດ້ເລັງເຖິງການຕອບທີ່ພຣະເຈົ້າຈະໃຫ້ແກ່ຄົນທີ່ບໍ່ຍອມຮັບການຮຽກຮ້ອງຂອງພຣະເຈົ້າເຊັ່ນດຽວກັນ.
- ສົນທະນາເຣື່ອງການເວົ້າຂອງຜູ້ທີ່ບໍ່ເຊື່ອ ເຣື່ອງນີ້ເປັນການທີ່ບໍ່ເຂົ້າໃຈຄວາມຄິດ ແລະຄວາມຮັກທີ່ມີຕໍ່ເຂົາ ສະນັ້ນມີທາງດຽວເທົ່ານັ້ນທີ່ຈະເຂົ້າໄປໃນງານລ້ຽງໄດ້ກໍຄືຜ່ານທາງຄວາມເຊື່ອໃນພຣະເຢຊູຄຣິດ.

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> ມັດທາຍ 22:11-14

1. ເປັນຫຍັງຜູ້ທີ່ນຸ່ງເຄື່ອງທີ່ບໍ່ເໝາະສົມຄົນນັ້ນຈຶ່ງບໍ່ປາກ? ທ່ານເຄີຍໄດ້ພົບກັບປັນຫາທີ່ຄ້າຍຄືເຣື່ອງນີ້ບໍ່ ທີ່ທ່ານພຍາຍາມຫລີກໜີຈາກຄວາມບາບ ແຕ່ແລ້ວກໍຖືກຈັບໄດ້?
2. ທ່ານໄດ້ຮຽນຈາກປະສົບການໃນເຣື່ອງນີ້ແນວໃດແດ່?
3. ໂທດກັມອັນໃດທີ່ຊາຍຄົນນີ້ໄດ້ຮັບ?
4. ໃນຊີວິດຂອງທ່ານໄດ້ສະແດງໃຫ້ຜູ້ບໍ່ເຊື່ອເຫັນຣາຊອານາຈັກຂອງພຣະເຈົ້າແນວໃດ?

<u>ຈົດຈໍ່ຢູ່ໃນພຣະຄັມພີແຫ່ງຄວາມຈິງ:</u>

- ພຣະເຈົ້າໄດ້ຊົງເຊີນທຸກ ໆ ຄົນທີ່ຈະເຂົ້າໄປໃນການນະມັສການຢູ່ໃນຣາຊອານາຈັກຂອງພຣະອົງດ້ວຍຄວາມຮັກ.
- ການປະຕິເສດຄໍາເຊີນຂອງພຣະເຈົ້ານໍາໄປເຖິງການພິພາກສາອັນໜັກນ່ວງ.
- ພຣະເຈົ້າໄດ້ຊົງຮຽກເອີ້ນໄພ່ພົນຂອງພຣະອົງໃຫ້ໄປເຊີນຄົນອື່ນ ໆເຂົ້າມາຮັບເອົາຄວາມລອດພົ້ນຈາກພຣະອົງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**